**ມິຊຊາອາທິດທີ 18 ກຳນົດທຳມະດາປີ A**

**ວັນທີ 2 ສິງຫາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 14, 13-21**

ໃນເວລານັ້ນ, ເມື່ອພຣະເຢຊູເຈົ້າໄດ້ຊາບຂ່າວວ່າຢວງບາບຕິສຕາຖືກຂ້າແລ້ວ ພຣະອົງກໍສະເດັດຈາກທີ່ນັ້ນລົງເຮືອໄປທີ່ປ່ຽວແຫ່ງໜຶ່ງຕ່າງຫາກ. ພໍຮູ້ວ່າພຣະອົງສະເດັດໄປທາງນັ້ນ, ປະຊາຊົນຈາກເມືອງຕ່າງໆກໍຍ່າງໄປຫາພຣະອົງ. ເມື່ອສະເດັດຂຶ້ນຈາກເຮືອ, ພຣະອົງຊົງທອດພຣະເນດເຫັນຝູງຄົນມາກມາຍ; ພຣະອົງຊົງຮູ້ສຶກສົງສານພວກເຂົາ, ແລະປິ່ນປົວຄົນເຈັບໄຊໃຫ້ດີ. ເມື່ອຕົກຄ່ຳແລ້ວ, ພວກສາວົກຫຍັບເຂົ້າມາທູນພຣະອົງວ່າ: "ບ່ອນນີ້ເປັນທີ່ປ່ຽວແລະເວລາກໍລ່ວງເລີຍໄປຫລາຍແລ້ວ, ຂໍພຣະອົງສົ່ງຄົນພວກນີ້ເມືອທ້ອນ,ໃຫ້ພວກເຂົາໄປຊື້ອາຫານຂອງກິນຕາມໝູ່ບ້ານ". ແຕ່ພຣະເຢຊູເຈົ້າກ່າວແກ່ພວກສາວົກວ່າ: "ບໍ່ຈຳເປັນໃຫ້ພວກເຂົາໄປດອກ ໃຫ້ພວກເຈົ້າເອງເອົາອາຫານລ້ຽງພວກເຂົາເຖີດ." ພວກສາວົກຈຶ່ງທູນຕອບພຣະອົງວ່າ: "ພວກຂ້ານ້ອຍມີຂະໜົມປັງແຕ່ຫ້າກ້ອນ ແລະປາສອງໂຕເທົ່ານັ້ນ!" ພຣະອົງຊົງກ່າວວ່າ: "ຈົ່ງເອົາມາໃຫ້ເຮົາເຖີດ." ແລະເມື່ອໄດ້ສັ່ງບອກໃຫ້ຝູງຄົນນັ່ງລົງຕາມຫຍ້າແລ້ວ, ພຣະອົງຊົງຈັບເອົາຂະໜົມປັງຫ້າກ້ອນແລະປາສອງໂຕນັ້ນ, ຊົງທອດພຣະເນດຂຶ້ນຟ້າແລະກ່າວຄຳສົມມະນາຄຸນ; ຕໍ່ໄປພຣະອົງຊົງບິຂະໜົມປັງແລະຍື່ນໃຫ້ພວກສາວົກເອົາໄປຢາຍໃຫ້ຝູງຄົນ. ທຸກຄົນໄດ້ຮັບກິນຈົນອີ່ມ, ແລ້ວຍັງເກັບເອົາເສດອາຫານທີ່ເຫລືອກິນນັ້ນໄດ້ເຕັມສິບສອງກະບຸງ ແລະຈຳນວນຄົນທີ່ໄດ້ກິນນັ້ນນັບໄດ້ຫ້າພັນຄົນ, ບໍ່ນັບຜູ້ຍິງແລະເດັກນ້ອຍ.

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ມທ 14, 13-21**

ວາຈາພຣະເຈົ້າວັນນີ້ສືບຕໍ່ຈາກຕອນທີ່ທ່ານຢວງບັບຕິສຕາຖືກຕັດຫົວໃນງານສະຫລອງວັນເກີດຂອງກະສັດເຮຣອດ. ຍ້ອນທ່ານຢວງບໍ່ອະນຸຍາດໃຫ້ກະສັດເຮຣອດເອົານາງເຮໂຣດີອັດ, ພັນລະຍາຂອງນ້ອງຊາຍຂອງເຂົາຄືຟີລີບ. ເມື່ອທ່ານຢວງເສຍຊີວິດແລ້ວ ພວກລູກສິດຂອງທ່ານຢວງກໍນຳເອົາສົບຂອງທ່ານໄປຝັງ. ຈາກນັ້ນ, ພວກເຂົາກໍໄປແຈ້ງຂ່າວໃຫ້ພຣະເຢຊູເຈົ້າຮູ້ຈັກ.

ວັນນີ້, ຫລັງຈາກທີ່ພຣະເຢຊູເຈົ້າໄດ້ຊາບຂ່າວວ່າທ່ານຢວງໄດ້ເສຍຊີວິດແລ້ວ, ພຣະອົງກໍລົງເຮືອສະເດັດໄປທີ່ປ່ຽວແຫ່ງໜຶ່ງຕ່າງຫາກ. ໃນພຣະຄຳພີ, ທີ່ປ່ຽວເປັນບ່ອນແຫ່ງການພົບພໍ້ກັບພຣະເຈົ້າ, ເປັນບ່ອນແຫ່ງການທົດສອບ, ເປັນບ່ອນທີ່ພຣະເຈົ້າສິດສອນແລະລ້ຽງເກືອປະຊາກອນຂອງພຣະອົງ. ເໝືອນກັບປະຊາກອນອິສຣາແອນຫລັງຈາກທີ່ໄດ້ອອກຈາກການເປັນຂ້ອຍທາດຂອງປະເທດເອຢິບ. ໂມແຊໄດ້ນຳພາພວກເຂົາເຂົ້າໄປໃນທີ່ປ່ຽວເປັນເວລາສີ່ສິບປີ. ໃນໄລຍະເວລານີ້, ພຣະເຈົ້າໄດ້ລ້ຽງເກືອປະຊາກອນຂອງພຣະອົງດ້ວຍອາຫານທີ່ລົງມາຈາກຟ້າອັນແມ່ນ “ມານນາ” (ອພຍ 16, 32-36). ອາຫານທິບນີ້ປຽບເໝືອນພຣະຄຸນທີ່ພຣະເຈົ້າປະທານໃຫ້ປະຊາກອນຂອງພຣະອົງ.

ວັນນີ້, ພຣະເຢຊູເຈົ້າກໍໄດ້ລ້ຽງເກືອຝູງຊົນໃນທີ່ປ່ຽວດ້ວຍເຂົ້າໜົມປັງຫ້າກ້ອນແລະປາສອງໂຕ. ກ່ອນທີ່ພຣະອົງຈະລ້ຽງເກືອຝູງຊົນ ພຣະອົງໄດ້ຈັບເອົາເຂົ້າໜົມປັງຫ້າກ້ອນແລະປາສອງໂຕ, ຊົງທອດພຣະເນດຂຶ້ນຟ້າແລະກ່າວຂອບພຣະຄຸນ ອັນເປັນເຄື່ອງໝາຍແຫ່ງການຮູ້ເຖິງພຣະຄຸນທີ່ພຣະເຈົ້າປະທານໃຫ້ປະຊາກອນຂອງພຣະອົງ. ສິ່ງທີ່ພຣະເຢຊູເຈົ້າກ່າວແລະກະທຳໃນທີ່ນີ້ ເປັນສິ່ງທີ່ພຣະສົງກ່າວແລະກະທຳໃນພິທີບູຊາມິຊຊາ. ເພາະພຣະສົງເປັນເໝືອນພຣະກຣິສໂຕອີກອົງໜຶ່ງທ່າມກາງປະຊາກອນຂອງພຣະອົງ ເພື່ອນນຳພາ, ສັ່ງສອນແລະລ້ຽງເກືອພວກເຂົາດ້ວຍວາຈາແລະພຣະກາຍຂອງພຣະເຢຊູເຈົ້າ.

**ພາວະນາ**

ໂອພຣະເຈົ້າ, ລູກຂໍຂອບພຣະຄຸນພຣະອົງທີ່ໄດ້ໄຂສຳແດງໃຫ້ລູກຮູ້ເຖິງຄວາມຮັກທີ່ພຣະອົງມີຕໍ່ປະຊາກອນຂອງພຣະອົງແລະຕໍ່ລູກດ້ວຍ. ຍ້ອນພຣະອົງໄດ້ລ້ຽງເກືອລູກດ້ວຍວາຈາແລະພຣະກາຍຂອງພຣະບຸດພຣະອົງ. ຂໍໃຫ້ລູກໄດ້ສະໜິດສຳພັນເປັນໜຶ່ງດຽວກັບພຣະອົງນັບມື້ນັບທະວີຂຶ້ນ. ເພື່ອລູກຈະໄດ້ເຕີບໃຫຍ່ຂຶ້ນໃນຄວາມເຊື່ອແລະຄວາມຮັກຕໍ່ພຣະອົງແລະຕໍ່ເພື່ອນພີ່ນ້ອງນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ